ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 52 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 09 ມັງກອນ 2017


ຫ້ອງການ ຄຄຊ
26
ວັນທີ 10 JAN 2017
ໂທລະສັບ 021 217770


**ລາຍງານການເຄື່ອນໄຫວປະຈຳອາທິດ**
**ທີ 12-16/12/2016 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ**
**ຂອງທະນາຄານແຫ່ງ ສປປ ລາວ**

## I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 1,57% ທຽບເອີໂຣ ພາຍຫຼັງຄະນະກໍາມະການກໍານົດນະໂຍບາຍການເງິນຂອງທະນາຄານກາງສະຫະລັດ (FOMC) ປັບຂຶ້ນອັດຕາດອກເບ້ຍໄລຍະສັ້ນ 0,25% ມາຢູ່ທີ່ລະດັບ 0,5-0,75%. ພ້ອມດຽວກັນນັ້ນ, ທະນາຄານກາງສະຫະລັດ (FED) ໄດ້ປັບເພີ່ມການຄາດຄະເນການຂະຫຍາຍຕົວທາງເສດຖະກິດຂອງສະຫະລັດເພີ່ມຂຶ້ນຈາກ 1,8% ມາເປັນ 1,9% ໃນປີ 2016 ນີ້.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 09/12/2016 | ອາທິດນີ້ 16/12/2016 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,0623 | 1,0459 | 1,57% |
| ໂດລາ/ເຢນ | 114,41 | 118,04 | -3,08% |
| ໂດລາ/ບາດ | 35,620 | 35,790 | -0,47% |
| ໂດລາ/ເປໂຊ | 49,73 | 50,01 | -0,56% |
| ໂດລາ/ຣູເປັຍ | 13.325 | 13.385,00 | -0,45% |
| ໂດລາ/ໂດລາສິງກະໂປ | 1,4229 | 1,4426 | -1,37% |
| ໂດລາ/ຢວນ | 6,9018 | 6,9561 | -0,78% |

1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນເພີ່ມຂຶ້ນ 5,51% ເປັນ 54,01 ໂດລາ/ບາເຣວ ພາຍຫຼັງຈະມີການປັບຂຶ້ນລາຄານ້ຳມັນດິບໃນປີ 2017 ຂອງ Goldman Sachs ເນື່ອງຈາກມີການຄາດຄະເນວ່າມີຄວາມເປັນໄປໄດ້ທີ່ກຸ່ມຜູ້ຜະລິດນ້ຳມັນໃນກຸ່ມ ແລະ ນອກກຸ່ມ ໂອເປັກ (OPEC) ມີແຜນຈະປັບຫຼຸດການຜະລິດນ້ຳມັນລົງ ປະມານ 300.000 ບາເຣວ/ວັນ, ໂດຍລາຄານ້ຳມັນໃນໄຕມາດ 2/2017 ຈະຢູ່ທີ່ລະດັບ 57,50 ໂດລາ/ບາເຣວ. ສ່ວນລາຄາຄຳຫຼຸດລົງ 3,06% ເປັນ 1.134,56 ໂດລາ/ອອນ.

2. ສະພາບເສດຖະກິດເງິນຕາພາຍໃນ

2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າ 0,10% ທຽບໂດລາ ແຕ່ແຂງຄ່າ 0,33% ທຽບໃສ່ເງິນບາດ. ຖ້າສົມທຽບໃສ່ທ້າຍປີຜ່ານມາເງິນກີບ ອ່ອນຄ່າ 1,91% ທຽບໂດລາແລະ ອ່ອນຄ່າ2,69% ທຽບໃສ່ເງິນບາດ.

| ອັດຕາ | ອາທິດຜ່ານມາ 09/12/2016 | | | ອາທິດນີ້ 16/12/2016 | | | % ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.310,09 | 8.354,67 | 8.327,98 | 8.319,31 | 8.358,00 | 8.336,57 | -0,11% | -0,04% | -0,10% | -2,02% | -1,80% | -1,91% |
| ບາດ | 234,66 | 236,35 | 235,70 | 233,97 | 235,44 | 234,92 | 0,29% | 0,39% | 0,33% | -2,69% | -2,75% | -2,69% |

2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ເພີ່ມຂຶ້ນ 1,47% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 3,22%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,17% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 11,85%.

2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທີ່ລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (09-15/12/2016) ເຫັນວ່າ ທທກ ຊື້ໂດລາສຸດທິ 46,62 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 80,72 ລ້ານໂດລາ ແລະ ຂາຍໂດລາໄດ້ 34,10 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 1.947,96 ລ້ານບາດ (ໃນນີ້ ຊື້ບາດໄດ້ 200,09 ລ້ານບາດ ແລະ ຂາຍບາດໄດ້ 2.148,05 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າ ເງິນໂດລາເພີ່ມຂຶ້ນ 88,51% ແລະ ເພີ່ມຂຶ້ນ 90,29% ສຳລັບເງິນບາດ.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 17,44 ລ້ານໂດລາ ແລະ ເງິນບາດ 29,00 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີຈຳນວນ 0,31 ລ້ານໂດລາສະຫະລັດ ແລະ ເງິນບາດ 18,17 ລ້ານບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ພາຍໃນອາທິດແມ່ນຊື້ເງິນສະກຸນເງິນໂດລາສະຫະລັດ 0,06 ລ້ານໂດລາ, ສ່ວນສະກຸນເງິນບາດແມ່ນບໍ່ມີການຊື້-ຂາຍ.

**ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ**

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 05-08/12/2016 | | ອາທິດທີ 09-15/12/2016 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. **ການຊື້ເງິນຕາຕ່າງປະເທດ** | **49,78** | **199,12** | **80,72** | **200,09** | **62,15%** | **0,49%** |
| - ທ/ຄທຸລະກິດລັດ | 5,58 | 50,49 | 9,36 | 194,99 | 67,74% | 286,20% |
| - ທ/ຄທຸລະກິດອື່ນໆ | 44,20 | 148,63 | 71,36 | 5,10 | 61,45% | -96,57% |
| 2. **ການຂາຍເງິນຕາຕ່າງປະເທດ** | **11,13** | **1.034,83** | **34,10** | **2.148,05** | **206,38%** | **107,58%** |
| - ທ/ຄທຸລະກິດລັດ | 9,92 | 96,82 | 11,44 | 137,60 | 15,32% | 42,12% |
| - ທ/ຄທຸລະກິດອື່ນໆ | 1,21 | 938,01 | 22,66 | 2.010,45 | 1772,73% | 114,33% |
| **ຊື້-ຂາຍສຸດທິ ທທກ** | **38,65** | **-835,71** | **46,62** | **-1.947,96** | **20,62%** | **133,09%** |
| - ຜົດຕ່າງ ຊື້-ຂາຍ | 77,64% | -419,70% | 57,76% | -973,54% | -25,61% | 131,96% |
| - ມູນຄ່າການຊື້-ຂາຍ | **60,91** | **1.233,95** | **114,82** | **2.348,14** | **88,51%** | **90,29%** |
| 3. **ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ** | **-9,25** | **-33,50** | **-17,44** | **-29,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 9,25 | 33,50 | 17,44 | 29,00 | | |
| 4. **ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **3,10** | **17,12** | **0,31** | **18,17** | | |
| 5. **ທຫລ ກັບ ພາກສ່ວນ ອື່ນໆ** | **0,03** | **0,00** | **0,06** | **0,00** | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,04 | 0,00 | 0,06 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,01 | 0,00 | 0,00 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 12/2016 ຄາດວ່າຈະຢູ່ໃນລະດັບ 2,49% ເພີ່ມຂຶ້ນຈາກ 2,09% ເມື່ອທຽບໃສ່ເດືອນ 11/2016.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 37,98 ລ້ານໂດລາສະຫະລັດທຽບເທົ່າ, ຫຼຸດລົງ 51,9% ທຽບໃສ່ອາທິດຜ່ານມາ.

## III. ວຽກງານວິຊາສະເພາະ

### 1. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 877 ສະບັບ ທຽບໃສ່ອາທິດຜ່ານມາເພີ່ມຂຶ້ນ 324 ສະບັບ ເທົ່າກັບ 58,58% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 373,11 ຕື້ກີບ ເພີ່ມຂຶ້ນ 124,39 ຕື້ກີບ ເທົ່າກັບ 50,01% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (09-15/12/2016) ມີຈຳນວນ 2.420 ຄັ້ງ, ໃນນີ້ມີສະກຸນເງິນກີບ 2.301 ຄັ້ງ, ໂດຍມີມູນຄ່າ 421,30 ຕື້ກີບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 161,21

ຕື້ກີບ ເທົ່າກັບ 61,98%, ສໍາລັບສະກຸນເງິນບາດມີການເຄື່ອນໄຫວ 1 ຄັ້ງ MT 202 ມູນຄ່າການໂອນ 50.000.000 ກີບ;

**ກະຊວງການເງິນ:** ມີການເຄື່ອນໄຫວ 119 ຄັ້ງ, ມີມູນຄ່າ 176,70 ຕື້ກີບ.

2. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.</u>

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.031,74 ຈຸດ ເພີ່ມຂຶ້ນ 1,74% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 76.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 370,02 ລ້ານກີບ ເພີ່ມຂຶ້ນ 19,96% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 55,77% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ (05-09/12/2016) | ດັດຊະນີອາທິດທີ (12-16/12/2016) | (ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | **1.014,05** | **1.031,74** | **55,77%** | |

<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u> (ຫົວໜ່ວຍມູນຄ່າ 1.000 ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈໍານວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈໍານວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈໍານວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 1.400 | 7.080.000 | 5.057 | 51.400 | 258.620.000 | 5.032 | 3.571,43 | 3.552,82 | -26 |
| ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ | 60.100 | 300.230.000 | 4.996 | 19.800 | 98.900.000 | 4.995 | -67,05 | -67,06 | -1 |
| ບໍລິສັດລາວເວີນ ມະຫາຊົນ | 100 | 590.000 | 5.900 | 0 | 0 | 5.900 | -100,00 | -100 | - |
| ບໍລິສັດປີໂຕລ້ຽມເທລດດິ້ງລາວ ມະຫາຊົນ | 100 | 250.000 | 2.500 | 5.000 | 12.500.000 | 2.500 | 4.900,00 | 4.900,00 | - |
| ບໍລິສັດສູວັນນີໂຮມເຊັນເຕີ ມະຫາຊົນ | 100 | 300.000 | 3.000 | 0 | 0 | 3.000 | -100,00 | -100 | - |
| ທັງໝົດ | 61.800 | 308.450.000 | 0 | **76.200** | **370.020.000** | | 23,30 | 19,96 | |

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ບັນດາໜ້າວຽກທີ່ຈັດຕັ້ງປະຕິບັດສໍາເລັດ: ❶ ຈັດກອງປະຊຸມຄະນະກໍາມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❷ ກອງປະຊຸມເປີດກວ້າງຮ່ວມກັບຄະນະຜູ້ອໍານວຍການ ແລະ ຄະນະກົມ ທຫລ ເພື່ອລະດົມຄໍາເຫັນໃສ່ 4 ຮ່າງຂໍ້ຕົກລົງຂອງ ຄຄຊ ຄື: 1. ຮ່າງຂໍ້ຕົກລົງວ່າດ້ວຍການຊື້-ຂາຍຫຼັກຊັບ ໂດຍບໍ່ວ່າງເງິນມັດຈໍາລ່ວງໜ້າ, ຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງລາຍຮັບ-ລາຍຈ່າຍຂອງສໍານັກງານ ຄຄຊ, ຮ່າງຂໍ້ຕົກລົງວ່າດ້ວຍການຈັດຊື້ຂອງສໍານັກງານ ຄຄຊ ແລະ ຮ່າງຂໍ້ຕົກລົງວ່າດ້ວຍການກວດກາພາຍໃນສໍານັກງານ ຄຄຊ ທີ່ ນະຄອນຫຼວງວຽງຈັນ ແລະ, ❸ ກອງປະຊຸມປຶກສາຫາລືກ່ຽວກັບວຽກງານການຄຸ້ມຄອງບໍລິຫານ (Corporate Governance) ລະຫວ່າງ ຄະນະກໍາມະການກໍາກັບຫຼັກຊັບ ແລະ ຕະຫຼາດຫຼັກຊັບແຫ່ງປະເທດໄທ (ກລຕ ໄທ) ແລະ ສະຖາບັນຜູ້ບໍລິຫານແຫ່ງປະເທດໄທ (IOD) ທີ່ ນະຄອນຫຼວງວຽງຈັນ;

- ສຳເລັດການເຂົ້າຮ່ວມເປັນປະທານກອງປະຊຸມຮອງລັດຖະມົນຕີກະຊວງການເງິນ ແລະ ຮອງຜູ້ວ່າການທະນາຄານ ອາຊຽນ+3 ທີ່ເມືອງ ກຸ້ຍຢາງ, ປະເທດ ສປ. ຈີນ;

- ສຳເລັດການຕ້ອນຮັບ ທ່ານ Jonathan (IMF) ກ່ຽວກັບການຈັດສຳມະນາວຽກງານຄຸ້ມຄອງເສດຖະກິດມະຫາພາກໃຫ້ແກ່ການນຳລະດັບສູງ, ຕ້ອນຮັບ ທ່ານ ນ. Irina ຫົວໜ້າກົມອາຊີປາຊີຟິກ WB ແລະ ຕ້ອນຮັບ ຄະນະສະຫະພັນບັນຊີຂອງ ອາຊຽນ ກ່ຽວກັບໂຄງການຈັດຕັ້ງປະຕິບັດ IFRS;

- ໄດ້ຮັບລາຍງານທຸລະກຳທີ່ໜ້າສົງໄສວ່າເປັນການຟອກເງິນ (STR) ຈາກທະນາຄານທຸລະກິດ 01 ສະບັບ, ຮອດປະຈຸບັນ STR ລວມທັງໝົດມີ 493 ສະບັບ.

4. <u>*ແຜນວຽກຈຸດສຸມອາທິດຕໍ່ໄປ:*</u>

- ກະກຽມຄວາມພ້ອມໃນການຈັດກອງປະຊຸມ ແລະ ເຂົ້າຮ່ວມກອງປະຊຸມຕ່າງໆ: ❶ ຈັດກອງປະຊຸມສະພາບໍລິຫານຂອງ ທະນາຄານແຫ່ງ ສປປ ລາວ, ❷ ຈັດກອງປະຊຸມຮ່ວມກັບກະຊວງການເງິນ ໃນຫົວຂໍ້ "ການກູ້ຢືມໂດຍນຳໃຊ້ອະສັງຫາລິມະສັບຄ້ຳປະກັນ", ❸ ຈັດກອງປະຊຸມສຳມະນາຮ່ວມກັບ ຄຄຊ ສສ.ຫວຽດນາມ, ❹ ຈັດກອງປະຊຸມເປີດກວ້າງ ເພື່ອລະດົມຄຳເຫັນໃສ່ (ຮ່າງ) ຂໍ້ຕົກລົງວ່າດ້ວຍການຊື້-ຂາຍໂດຍບໍ່ວາງເງິນມັດຈຳລ່ວງໜ້າ, ເຂົ້າຮ່ວມກອງປະຊຸມລັດຖະບານເປີດກວ້າງປະຈຳປີ 2015-2016 ແລະ ແຜນວຽກຈຸດສຸມປີ 2017 ແລະ ❺ ເຂົ້າຮ່ວມກອງປະຊຸມວິຊາການຂອງຄະນະກຳມະການຮ່ວມມືລາວ-ຫວຽດນາມ ແລະ ຫວຽດນາມ-ລາວ ເພື່ອກະກຽມໃຫ້ແກ່ກອງປະຊຸມຄັ້ງທີ 39 ລະຫວ່າງ ລັດຖະບານ ສປປ ລາວ ແລະ ລັດຖະບານ ສສ. ຫວຽດນາມ;

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;

- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;

- ສືບຕໍ່ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ.

**ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ**

ເພັດສະຖາພອນ ແກ້ວວົງວິຈິດ